JDB
ທະນາຄານຮ່ວມພັດທະນາ ມະຫາຊົນ

ບົດຖະແຫຼງຂ່າວ

ທະນາຄານ ຮ່ວມພັດທະນາ ມະຫາຊົນ

ເຖິງ: ທ່ານ ລູກຄ້າ ແລະ ຜູ້ຖືຮຸ້ນ ຂອງທະນາຄານຮ່ວມພັດທະນາ ມະຫາຊົນ ທີ່ເຄົາລົບ ແລະ ນັບຖືຢ່າງສູງ.

ຂ້າພະເຈົ້າ, ສາຄອນ ຍໍພັນໄຊ ຜູ້ອຳນວຍການ ທະນາຄານຮ່ວມພັດທະນາ ມະຫາຊົນ.

ມື້ນີ້, ຂ້າພະເຈົ້າຂໍອະນຸຍາດສື່ສານໂດຍກົງກັບທຸກທ່ານ ເພາະຂ້າພະເຈົ້າເຊື່ອວ່າ ໃນຊ່ວງເວລາແບບນີ້ແມ່ນມີຄວາມຈຳເປັນຫຼາຍ ທີ່ຕ້ອງໄດ້ສື່ສານຢ່າງກົງໄປກົງມາ ແລະ ມີຄວາມຊັດເຈນທີ່ສຸດ.

ທະນາຄານຮ່ວມພັດທະນາ ມະຫາຊົນ ແມ່ນຍັງຄົງມີສະຖຽນລະພາບ, ຍັງເປີດດຳເນີນງານເປັນປົກກະຕິ ແລະ ຍັງຄົງມຸ່ງໝັ້ນທີ່ຈະໃຫ້ບໍລິການແກ່ລູກຄ້າ ແລະ ຄູ່ຮ່ວມທຸລະກິດ ຢ່າງເຕັມທີ່.

ສຸນບໍລິການ/ໜ່ວຍບໍລິການຂອງພວກເຮົາ ແມ່ນເປີດໃຫ້ບໍລິການເປັນປົກກະຕິ, ການຊຳລະສະສາງ ກໍຍັງຄົງດຳເນີນໄປຢ່າງປົກກະຕິ, ເງິນຝາກຂອງລູກຄ້າ ຍັງຄົງໄດ້ຮັບການຄຸ້ມຄອງ ພາຍໃຕ້ກົດລະບຽບຂອງ ທະນາຄານແຫ່ງ ສປປ ລາວ ແລະ ລະບຽບການກ່ຽວຂ້ອງ. ນອກຈາກນັ້ນ, ການໃຫ້ບໍລິການຜ່ານແອັບພລິເຄເຊັນຂອງທະນາຄານຢູ່ເທິງມືຖື (Mobile Banking/Digital Banking), ການບໍລິການບັດສາກົນ, ການບໍລິການດ້ານສິນເຊື່ອ, ການບໍລິການດ້ານວຽກງານບໍລິຫານທຶນ ແລະ ການເຮັດທຸລະກຳລະຫວ່າງປະເທດ ຍັງຄົງດຳເນີນໄປຢ່າງເປັນປົກກະຕິ.

ໃນຫຼາຍອາທິດຜ່ານມານີ້, ພວກເຮົາໄດ້ມີການປຶກສາຫາລືຮ່ວມກັບອົງການຈັດຕັ້ງກ່ຽວຂ້ອງທີ່ຄຸ້ມຄອງດ້ານກົດລະບຽບການຂອງ ສະຫະພາບເອີຣົບ ກ່ຽວກັບ ບາງຂັ້ນຕອນການປະຕິບັດ ແລະ ການດຳເນີນງານຂ້າມພົມແດນ ເພື່ອຍົກລະດັບການຈັດຕັ້ງປະຕິບັດຕາມ ຂັ້ນຕອນຕ່າງໆໃຫ້ສອດຄ່ອງ ພາຍໃຕ້ກົດລະບຽບທີ່ ສະຫະພາບເອີຣົບ ວາງອອກ.

ເຊິ່ງພວກເຮົາ ໄດ້ໃຫ້ຄວາມສຳຄັນກັບຂະບວນການນີ້ ດ້ວຍຄວາມຮັບຜິດຊອບສູງ.

ນັບຕັ້ງແຕ່ໄດ້ຮັບແຈ້ງຈາກສະຫະພາບເອີຣົບ, ພວກເຮົາກໍໄດ້ດຳເນີນການຢ່າງຮີບດ່ວນເພື່ອເຂົ້າພົບ ແລະ ປຶກສາຫາລືໂດຍກົງ ກັບອົງການຈັດຕັ້ງທີ່ກ່ຽວຂ້ອງ ໂດຍການປະສານສົມທົບ ແລະ ຮ່ວມມືຢ່າງໃກ້ສິດ ກັບ ທະນາຄານແຫ່ງ ສປປ ລາວ, ບັນດາທີ່ປຶກສາຊ່ຽວຊານສະເພາະດ້ານກົດລະບຽບຂອງສະຫະພາບເອີຣົບ ແລະ ຜູ້ຊ່ຽວຊານດ້ານກົດໝາຍສາກົນ ທີ່ມີປະສົບການສູງໃນຂົງເຂດ ວຽກງານດັ່ງກ່າວ.

ວຽກງານນີ້ ກໍ່ກຳລັງດຳເນີນໄປຢ່າງຕັ້ງໜ້າ ໂດຍມີການປະສານງານກັນຢ່າງໃກ້ຊິດ ກັບທຸກພາກສ່ວນກ່ຽວຂ້ອງ.

ອີງຕາມການວິເຄາະ ແລະ ປະເມີນຜົນທີ່ໄດ້ດຳເນີນການມາຮອດປັດຈຸບັນ, ພວກເຮົາເຂົ້າໃຈວ່າ ເຫດການທີ່ກຳລັງເປັນປະເດັນປຶກສາຫາລືກັນນັ້ນ ສ່ວນໃຫຍ່ແມ່ນກ່ຽວຂ້ອງກັບ ການຊີ້ແຈງດ້ານຂັ້ນຕອນ ແລະ ການປັບປຸງການດຳເນີນງານບາງຈຸດ ເພື່ອໃຫ້ສອດຄ່ອງກັບ ກົດລະບຽບກ່ຽວຂ້ອງ. ໃນຂະບວນການເຫຼົ່ານີ້ ແມ່ນບໍ່ໄດ້ກ່ຽວຂ້ອງ ຫຼື ສົ່ງຜົນກະທົບຕໍ່ກັບສະຖຽນລະພາບລວມຂອງທະນາຄານ ຫຼື ຄວາມຕໍ່ເນື່ອງໃນການດຳເນີນກິດຈະການຂອງທະນາຄານ ແຕ່ຢ່າງໃດ.

ເລກທີ 82 ຖະໜົນ ລ້ານຊ້າງ ບ້ານຫັດສະດີ ເມືອງຈັນທະບຸລີ ນະຄອນຫຼວງວຽງຈັນ, 01000, ສປປ ລາວ ໂທ.(+856-21) 213531-6
ສາຍດ່ວນ: 1499, WEBSITE:WWW.JDBBANK.COM.LA; EMAIL:INFO@JDBBANK.COM.LA

ພວກເຮົາຍັງຄົງສືບຕໍ່ປະສານງານ ແລະ ເຮັດວຽກຢ່າງສ້າງສັນກັບທຸກພາກສ່ວນທີ່ກ່ຽວຂ້ອງ ແລະ ພວກເຮົາກໍມີຄວາມເຊື່ອໝັ້ນໃນ ຂະບວນການທີ່ກຳລັງດຳເນີນຢູ່ໃນປັດຈຸບັນ.

ພ້ອມດຽວກັນນັ້ນ, ສຳລັບຫຼາຍທ່ານທີ່ອາດຈະຍັງບໍ່ຮູ້ຈັກ ຫຼື ຄຸ້ນເຄີຍກັບທະນາຄານຂອງພວກເຮົາ, ທະນາຄານຮ່ວມພັດທະນາ ມະຫາຊົນ ແມ່ນທະນາຄານທຸລະກິດ ທີ່ຈົດທະບຽນເຂົ້າເປັນ ມະຫາຊົນ ໃນຕະຫຼາດຫຼັກຊັບລາວ. ເຊິ່ງຜ່ານມາ, ກໍໄດ້ໃຊ້ເວລາ ພັດທະນາຕົນເອງມາຫຼາຍປີ ເພື່ອສ້າງຂີດຄວາມສາມາດຕົນໃຫ້ກ້າວທັນໃນລະດັບສາກົນ, ມີການພັດທະນາລະບົບການດຳເນີນງານ ຕ່າງໆໃຫ້ມີຄວາມທັນສະໄໝ ແລະ ມີໂຄງຮ່າງພື້ນຖານທີ່ເຂັ້ມແຂງດ້ານການປະຕິບັດຕາມລະບຽບການ.

ນອກຈາກນັ້ນ, ພວກເຮົາກໍໄດ້ຮັບການກວດສອບບັນຊີ ຢ່າງເປັນປະຈຳ ຕາມມາດຕະຖານສາກົນ. ພ້ອມທັງມີສາຍພົວພັນອັນຍາວນານ ຮ່ວມກັບ ບັນດາທີ່ປຶກສາ ແລະ ສະຖາບັນການເງິນຕ່າງໆໃນຫຼາຍຂົງເຂດ, ລວມທັງຢູ່ໃນ ທະວີບເອີຣົບ.

ໃນຫຼາຍປີຜ່ານມາ, ໜຶ່ງໃນຍຸດທະສາດສຳຄັນຂອງພວກເຮົາ ແມ່ນການເຊື່ອມໂຍງເຊື່ອມຈອດເຂົ້າກັບຕະຫຼາດການເງິນສາກົນ ແລະ ໄດ້ ມີການປັບປຸງການດຳເນີນງານຕ່າງໆ ເພື່ອໃຫ້ສອດຄ່ອງ ກັບມາດຕະຖານ ແລະ ກົດລະບຽບຕ່າງໆ ຂອງສະຫະພາບເອີຣົບ.
ດັ່ງນັ້ນ, ວຽກງານທີ່ພວກເຮົາກຳລັງຈັດຕັ້ງປະຕິບັດໃນປັດຈຸບັນ ຈຶ່ງບໍ່ແມ່ນການປ່ຽນແປງທິດທາງໃນການດຳເນີນທຸລະກິດ, ແຕ່ມັນ ແມ່ນສ່ວນໜຶ່ງຂອງຂະບວນການພັດທະນາທີ່ກ້າວຂຶ້ນຕື່ມ ເພື່ອຫັນຕົນເອງໃຫ້ໄປສູ່ຄວາມທັນສະໄໝ ແລະ ການຂະຫຍາຍຕົວສູ່ເວທີ ສາກົນ ເຊິ່ງກໍເປັນວຽກງານໜຶ່ງທີ່ໄດ້ດຳເນີນການມາກ່ອນໜ້ານີ້ແລ້ວ.

ດັ່ງນັ້ນ, ຂ້າພະເຈົ້າ ຂໍແຈ້ງກັບບັນດາທ່ານ ເພື່ອເປັນບ່ອນອີງໃນທາງປະຕິບັດ ເປັນຕົ້ນແມ່ນສຳລັບລູກຄ້າ ແລະ ຄູ່ຮ່ວມທຸລະກິດຂອງ ພວກເຮົາ ຢ່າງຊັດເຈນ ດັ່ງນີ້:

- ລູກຄ້າ ຍັງຄົງສາມາດເຂົ້າເຖິງ ແລະ ນຳໃຊ້ບັນຊີຂອງຕົນ ໄດ້ຕາມປົກກະຕິ.
- ການໂອນເງິນພາຍໃນ ແລະ ລະຫວ່າງປະເທດ ຍັງຄົງດຳເນີນໄດ້ຕາມປົກກະຕິ.
- ການໃຫ້ບໍລິການບັດສາກົນ ແລະ ການບໍລິການຜ່ານແອັບທະນາຄານເທິງມືຖື ຍັງຄົງໃຫ້ບໍລິການໄດ້ຕາມປົກກະຕິ.
- ວຽກງານຄ້ຳປະກັນສິນເຊື່ອເພື່ອການຄ້າ (Trade finance), ວຽກງານບໍລິຫານທຶນ, ການປ່ອຍສິນເຊື່ອ ແລະ ການບໍລິການ ຂອງທະນາຄານປະຈຳອັນ (ເຊັ່ນ: ຝາກ - ຖອນ - ແລກປ່ຽນ ເປັນຕົ້ນ) ແມ່ນຍັງສືບຕໍ່ໃຫ້ບໍລິການໂດຍບໍ່ມີການຢຸດສະງັກ.
- ທີມງານບໍລິການລູກຄ້າຂອງພວກເຮົາຍັງຄົງພ້ອມໃຫ້ບໍລິການຢ່າງເຕັມທີ່ ແລະ ເຮົາມີທີມງານສະໜັບສະໜຸນລູກຄ້າທີ່ຍັງຄົງ ປະຈຳການ ແລະ ປະຕິບັດງານຕະຫຼອດ 24 ຊົ່ວໂມງ 7 ວັນຕໍ່ອາທິດ.

ສະຫຼຸບສັ້ນໆຄື: ທະນາຄານ ກໍຍັງຄົງດຳເນີນງານເປັນປົກກະຕິ ໄປຄວບຄູ່ກັບຂະບວນການຍົກລະດັບວຽກງານປະຕິບັດຕາມໃຫ້ ສອດຄ່ອງກັບລະບຽບການກຳນົດ (Compliance) ກໍກຳລັງດຳເນີນຕໍ່ໄປຄວບຄູ່ກັນ.

ແລະສິ່ງສຳຄັນ, ສາຍສຳພັນກັບສາກົນໃນຂົງເຂດອື່ນຂອງພວກເຮົາ ທີ່ຢູ່ນອກຂອບເຂດຂອງ ສະຫະພາບເອີຣົບ ທີ່ກຳລັງເປັນປະເດັນ ການປຶກສາຫາລືຮ່ວມກັນນັ້ນ ແມ່ນຍັງຄົງດຳເນີນໄປໄດ້ຢ່າງປົກກະຕິ ແລະ ບໍ່ໄດ້ຮັບຜົນກະທົບໃດໆ.

ພ້ອມກັນນັ້ນ, ພວກເຮົາ ກໍຍັງຖືເອົາໄລຍະເວລານີ້ ເປັນໂອກາດອັນດີ ໃນການເພີ່ມທະວີຄວາມເຂັ້ມແຂງແກ່ຕົນເອງໃຫ້ເຂັ້ມແຂງຂຶ້ນໃນ ຕໍ່ໜ້າ.

ນອກຈາກນີ້, ພວກເຮົາ ກຳລັງປັບປຸງຍົກລະດັບຂັ້ນຕອນການເຮັດວຽກພາຍໃນ, ປັບປຸງລະບົບການປະຕິບັດງານໃຫ້ສອດຄ່ອງຕາມກົດ ລະບຽບ, ເສີມສ້າງວຽກງານການຄຸ້ມຄອງບໍລິຫານທີ່ດີ ແລະ ເຮັດວຽກຄຽງບ່າຄຽງໄຫຼ່ຮ່ວມກັບ ບັນດາຜູ້ຊ່ຽວຊານສາກົນທີ່ມີປະສົບ ການສູງ ເພື່ອຮັບປະກັນວ່າ ທະນາຄານຮ່ວມພັດທະນາ ມະຫາຊົນ ຫຼື JDB ຈະສືບຕໍ່ບັນລຸ ແລະ ຮັກສາມາດຕະຖານ ຂອງສະຖາບັນ ການເງິນສາກົນສະໄໝໃໝ່ ທີ່ທັນສະໄໝ.

ພາຍຫຼັງ ການປຶກສາຫາລືໃນຄັ້ງນີ້ສຳເລັດລົງຢ່າງສົມບູນ, ການປັບປຸງເຫຼົ່ານີ້ ຈະກາຍເປັນພື້ນຖານອັນແຂງແກ່ນໃຫ້ແກ່ທະນາຄານພວກ ເຮົາໄປອີກຍາວນານ.

JDB
ທະນາຄານຮ່ວມພັດທະນາ ມະຫາຊົນ
Joint Development Bank Public

ເຖິງບັນດາລູກຄ້າທີ່ຮັກແພງທຸກທ່ານ, ຂ້າພະເຈົ້າຂໍຢັ້ງຢືນວ່າ: ທະນາຄານຂອງທ່ານແຫ່ງນີ້ແມ່ນຍັງຄົງຢູ່ ແລະ ພ້ອມທີ່ຈະໃຫ້ບໍລິການແກ່ທ່ານ ຢ່າງເຕັມທີ່ ຄືກັນກັບທີ່ເຄີຍປະຕິບັດໃນໄລຍະຜ່ານມາ.

ເຖິງບັນດາຄູ່ຮ່ວມທຸລະກິດ ແລະ ນັກລົງທຶນທຸກທ່ານ: ທະນາຄານຮ່ວມພັດທະນາ ມະຫາຊົນ ຍັງຄົງຍຶດໝັ້ນຕໍ່ຫຼັກການຄວາມໂປ່ງໃສ, ຄວາມເປັນມືອາຊີບ ແລະ ການເຕີບໂຕໃນລະດັບສາກົນ ຢ່າງຍືນຍົງໃນໄລຍະຍາວ.

ສຸດທ້າຍນີ້, ຂ້າພະເຈົ້າ ຂໍອະນຸຍາດສັງລວມຄືນໂດຍຫຍໍ້ເປັນ 3 ປະເດັນ ດັ່ງຕໍ່ໄປນີ້:

- ປະເດັນທີໜຶ່ງ: ທະນາຄານ ຮ່ວມພັດທະນາ ມະຫາຊົນ ຍັງຄົງມີຄວາມໝັ້ນຄົງທາງດ້ານການເງິນຢ່າງເຂັ້ມແຂງ ແລະ ເປີດດຳເນີນງານ ເປັນປົກກະຕິ.
- ປະເດັນທີສອງ: ພວກເຮົາ ກຳລັງໃຫ້ການຮ່ວມມືຢ່າງເປີດເຜີຍ ແລະ ຢ່າງສ້າງສັນ ຮ່ວມກັບບັນດາອົງການຄຸ້ມຄອງທີ່ກ່ຽວຂ້ອງ, ໂດຍມີຄວາມຄືບໜ້າເປັນກ້າວໆ ພາຍໃຕ້ຂະບວນການທີ່ກຳລັງດຳເນີນການຢູ່ໃນປັດຈຸບັນ.
- ປະເດັນທີສາມ: ທິດທາງ ແລະ ເປົ້າໝາຍໃນໄລຍະຍາວຂອງພວກເຮົາ ແມ່ນບໍ່ມີການປ່ຽນແປງແຕ່ຢ່າງໃດ. ພວກເຮົາ ຈະສືບຕໍ່ເພີ່ມທະວີ ຂີດຄວາມສາມາດຂອງຕົນໃນລະດັບສາກົນ, ຫັນລະບົບການດຳເນີນງານໃຫ້ທັນສະໄໝ ແລະ ສ້າງ ທະນາຄານຮ່ວມພັດທະນາ ມະຫາຊົນ ຫຼື JDB ໃຫ້ກາຍເປັນສະຖາບັນການເງິນທີ່ໄດ້ຮັບຄວາມໄວ້ວາງໃຈສູງສຸດຈາກສັງຄົມ ໂດຍມີການດຳເນີນງານສອດຄ່ອງ ຕາມມາດຕະຖານສາກົນ ຢ່າງແທ້ຈິງ.

ຂໍຂອບໃຈ.

ສາຄອນ ຍໍພັນໄຊ
ຜູ້ອຳນວຍການ (CEO)
ທະນາຄານຮ່ວມພັດທະນາ ມະຫາຊົນ

ທະນາຄານຮ່ວມພັດທະນາ ມະຫາຊົນ
Joint Development Bank Public